ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 02 ຫາ 06 ກັນຍາ 2024



ການນຳລົງພື້ນທີ່ຕິດຕາມວຽກງານ ຕ້ານແລ້ງ-ຕ້ານຖ້ວມ ປະຕູນ້ຳເຂດວຽງຈັນໃຕ້

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ການນຳລົງພື້ນທີ່ຕິດຕາມວຽກງານຕ້ານແລ້ງ-ຕ້ານຖ້ວມ ປະຕູນ້ຳເຂດວຽງຈັນໃຕ້

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ເພື່ອປະຕິບັດຕາມແຜນການຕ້ານແລ້ງ-ຕ້ານຖ້ວມ ແລະ ແກ້ໄຂບັນຫານ້ຳຖ້ວມຂັງ ໃນເນື້ອທີ່ທຳການຜະລິດກະສິກຳ ໃນຕອນເຊົ້າວັນທີ 12 ສິງຫາ 2024 ທ່ານ ລິນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ພ້ອມດ້ວຍ ທ່ານ ອາດສະພັງທອງ ສີພັນດອນ ເຈົ້າຄອງນະຄອນຫຼວງວຽງຈັນ ໄດ້ລົງພື້ນທີ່ຕິດຕາມປະຕູນ້ຳເຂດວຽງຈັນໃຕ້ ຢູ່ທີ່ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ. ມີບັນດາຫົວໜ້າ-ຮອງຫົວໜ້າກົມ, ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ, ເຈົ້າເມືອງໆຫາດຊາຍຟອງ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຕິດຕາມ. ຈຸດປະສົງການລົງພື້ນທີ່ໃນຄັ້ງນີ້ ແມ່ນເພື່ອລົງຕິດຕາມສະພາບຂອງລະດັບນ້ຳໃນແຕ່ລະປ່ອງປະຕູນ້ຳຢູ່ໃນເຂດວຽງຈັນໃຕ້ (ເມືອງຫາດຊາຍຟອງ) ກ່ຽວກັບການແກ້ໄຂຕ້ານໄພນ້ຳຖ້ວມ ຄື: ຈຸດປະຕູນ້ຳຫ້ວຍໝາກຮຽວ 1 ສາເຫດຍ້ອນແຂ້ວເຟືອງມີການເປ່ເພ ຈຶ່ງບໍ່ສາມາດ ປິດ-ເປີດ ປະຕູລະບາຍນ້ຳໄດ້ ແລະ ຈຸດປະຕູນ້ຳຫ້ວຍເດື່ອ ຊຶ່ງລວມມີ 4 ປ່ອງ ໃຊ້ໄດ້ 3 ປ່ອງ (ໃຊ້ບໍ່ໄດ້ 1 ປ່ອງ) ສາເຫດຍ້ອນເຕົ້າພວງມະໄລຂາດນ້ຳຫູ່ລື່ນ.

ເນື່ອງໃນໂອກາດລົງຕິດຕາມພື້ນທີ່ໃນຄັ້ງນີ້ ການນຳ ທັງສອງພາກສ່ວນ ໄດ້ຊີ້ນຳໃຫ້ພະແນກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ຮ່ວມກັບກົມ

ວິຊາການກໍຄື ກົມຊົນລະປະທານ ໃຫ້ສືບຕໍ່ເອົາໃຈໃສ່ຕິດຕາມສະພາບການລະບາຍນໍ້າຂອງແຕ່ລະປ່ອງປະຕູນໍ້າເປັນປະຈຳ, ເລັ່ງແກ້ໄຂໃນແຕ່ລະຈຸດທີ່ມີບັນຫາພ້ອມທັງ, ແຕ່ງຕັ້ງພະນັກງານວິຊາການທີ່ກ່ຽວຂ້ອງ ກໍຄືວິຊາການສະເພາະດ້ານ ເພື່ອຕິດຕາມສະພາບການຂອງນໍ້າຢ່າງໃກ້ຊິດ ພ້ອມທັງກະກຽມເຄື່ອງຈັກສູບນໍ້າທີ່ສາມາດນຳໃຊ້ໄດ້ໄວ້ໃນແຕ່ລະຈຸດ ເພື່ອກຽມຄວາມພ້ອມເມື່ອເກີດມີບັນຫາໂດຍສະເພາະແມ່ນໃນໄລຍະລະດູຝົນ.








<u>ຄະນະຮັບຜິດຊອບ:</u>
ທ່ານ ສີປະໄພ ໄຊສີງຄານ
ທ່ານ ສີສະຫວາດ ທອມດາລາ

<u>ບັນນາທິການ:</u>
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໄຊລາ ສິມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

<u>ຈັດໜ້າອອກແບບໂດຍ:</u>
ທ່ານ ນ. ສີອຳນອນ ໄຊຍະລາດ

<u>ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່:</u> ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;